ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ( ຄຄຊ)
(ຫ້ອງການ ຄຄຊ)

National Regulatory Authority
for UXO/Mine Action Sector in Lao PDR (NRA)
(NRA Office)

---

ເລກທີ: /ຄຄຊ. ຫກ

ນະຄອນຫຼວງວຽງຈັນ, ວັນທີ: 19 / 11 / 2010

**ກອງປະຊຸມກຸ່ມວິຊາການຂອງໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ. ກອງປະຊຸມໄດ້ຈັດຂຶ້ນໃນເວລາ 8:30 ໂມງເຊົ້າ ເຖິງ 12ໂມງເຊົ້າ, ໃນວັນທີ 29 / 09 / 2010 ທີ່ຫ້ອງປະຊຸມ ສູນຟື້ນຟູຄົນພິການແຫ່ງຊາດ.**

***ວາລະກອງປະຊຸມທີ 1*** (ເປີດພິທີກອງປະຊຸມ) ໂດຍທ່ານ ເພັດສະຫວ່າງ ສູນນະລາດ, ຮອງ ຫົວໜ້າຫ້ອງການ ຄຄຊ ໄດ້ກ່າວຍິນດີຕ້ອນຮັບແຂກ ແລະ ເປີດກອງປະຊຸມຢ່າງເປັນທາງການ.

***ວາລະກອງປະຊຸມທີ 2*** **(ບົດບັນທຶກກອງປະຊຸມທີ່ຜ່ານມາ)** ທ່ານ ບຸນຕາວ ຈັນທະວົງສາ (ຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ) ໄດ້ລາຍງານກ່ຽວກັບກອງປະຊຸມທີ່ຜ່ານມາ ສ່ວນຫຼັກແມ່ນໄດ້ມີການປຶກສາຫາລືກັນໃນການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ. ຄວາມຄືບໜ້າການເຮັດສຳເລັດກອງປະຊຸມປຶກສາຫາລື ກັບບັນດາອຳນາດການປົກຄອງຂັ້ນແຂວງ, ຂັ້ນເມືອງ, ບັນດາພາກລັດ ແລະ ອົງການທີ່ເຮັດວຽກຮ່ວມກັນ ແລະ ການລາຍງານອັນທີບດ່ວນ ກໍລະນີທາກມີອຸປະຕິເຫດເກີດຂຶ້ນໃນຕໍ່ໜ້າຢູ່ໃນ 13ແຂວງ. ໃນນັ້ນ, ກອງປະຊຸມຜ່ານມາຍັງໄດ້ລາຍງານຈຳນວນຕົວເລກຂອງຜູ້ທີ່ໄດ້ຮັບບາດເຈັບ ແລະ ເສຍຊີວິດ ຈາກ ລບຕ, ພ້ອມທັງການລາຍງານເພີ້ມຈຳນວນຕົວເລກຂອງບ້ານຈາກ ຮສສ ຂັ້ນແຂວງ, ຂັ້ນເມືອງ. ຍັງໄດ້ນຳສະເໜີນະໂຍບາຍການປິ່ນປົວ ຜູ້ທີ່ຫຼອດຊີວິດຈາກ ລບຕ ຢູ່ໃນ 7 ແຂວງທົ່ວປະເທດ. ນອກນັ້ນ, ຍັງໄດ້ເວົ້າເຖິງວິທີການປະກອບເອກະສານເພື່ອຂໍຄວາມຊ່ວຍເຫຼືອເລື້ອງການປິ່ນປົວຂອງຜູ້ລອດຊີວິດ ທີ່ບໍ່ໄດ້ນອນຢູ່ໃນເປົ້າໝາຍຂອງໂຄງການ ໂດຍຜ່ານຫ້ອງການ ຄຄຊ ເພື່ອເປັນຜູ້ປະສານງານໄປຍັງອົງການທີ່ຊ່ວຍເຫຼືອຕ່າງໆ. ຍັງໄດ້ລາຍງານການເຮັດສຳເລັດໃນ 6ແຜນຍຸດທະສາດ ແລະ ການກະກຽມວຽກງານຕ່າງໆ ໃສ່ໃນໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ ພ້ອມທັງທຸກບັນດາຜູ້ປະຕິບັດງານ ໃຫ້ທວງທັນກັບກອງປະຊຸມລັດພາຄີສົນທິສັນຍາ ທີ່ຈະຈັດຂຶ້ນເປັນຄັ້ງທຳອິດທີ່ປະເທດລາວ ໃນເດືອນ 11 ປີ 2010ນີ້.

***ວາລະກອງປະຊຸມທີ 3*** **(ຂໍ້ຄິດເຫັນອື່ນໆຂອງບັນດາແຂກ ຕໍ່ກອງປະຊຸມທີ່ຜ່ານມາ)** ທ່ານ ພີວບິນ ຊຽວຊານ/ຄຄຊ ໄດ້ມີຂໍ້ຄິດເຫັນເພີ້ມຕື່ມວ່າ; ກອງປະຊຸມໃນຄັ້ງກ່ອນ ແມ່ນເວົ້າເຖິງເລື້ອງການສ້າງ 6ແຜນຍຸດທະສາດຂອງໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ ແລະໃນກອງປະຊຸມຄັ້ງນີ້ຈະສືບຕໍ່ບໍ່?.
ທ່ານ ບຸນຕາວ ຈັນທະວົງສາ (ຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ສົບເຄາະຮ້າຍຈາກ ລບຕ) ໄດ້ກ່າວວ່າ; ໃນ6ແຜນຍຸດທະສາດຍັງຈະສືບຕໍ່ສະຫຼຸບສັງລວມ ແລ້ວຈະນຳສະເໜີໃນກອງປະຊຸມໃນຄັ້ງໜ້າ.

***ວາລະກອງປະຊຸມທີ 4*** **(ການລາຍງານຄວາມຄືບໜ້າການສຳຫຼວດໄລຍະ 2)** ທ່ານ ບຸນຕາວ ຈັນທະວົງສາ (ຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ) ໄດ້ລາຍງານໃນກອງປະຊຸມໃຫ້ຮູ້ວ່າ: ບັນດາຂໍ້ມູນທີ່ເກັບກຳມານັ້ນ ແມ່ນໃຫ້ຮູ້ເຖິງສາເຫດຂອງອຸປະຕິເຫດວ່າ ເກີດຂຶ້ນຢູ່ໃສ ເພື່ອຈະໄດ້ກຳນົດບູລິມະສິດພື້ນທີ່ໃນວຽກງານກວດກູ້ ແລະ ເປົ້າໝາຍໃນການໂຄສະນາສຶກສາຄວາມສ່ຽງ ເພື່ອໃຫແທດເໝາະກັບຄວາມເປັນຈິງ ເພາະເວລາເກີດອຸປະຕິເຫດຢູ່ນັ້ນ ພວກເຂົາເຈົ້າກຳລັງເຮັດຫຍັງ? ໃນພາກສ່ວນຂອງ ການເກັບກຳຂໍ້ມູນໄລຍະ 2 ນີ້ ແມ່ນຈະຈຳແນກລະອຽດວ່າ ກິດຈະກຳຕົ້ນຕໍທີ່ພາໃຫ້ເກີດອຸປະຕິເຫດມີຫັຍງແດ່ ແລະມີເດັກນ້ອຍຍິງ, ຊາຍ, ຜູ້ໃຫ່ຍຍິງ, ຊາຍຫຼາຍປານໃດ? ເພື່ອກຳນົດຄວາມຕ້ອງການຊ່ວຍເຫຼືອຜູ້ລອດຊີວິດໃນການຟື້ນຟູທາງດ້ານຮ່າງກາຍ ແລະ ການຊ່ວຍເຫຼືອທາງດ້ານເສດຖະກິດສັງຄົມອື່ນໆ.

ປະຈຸບັນແມ່ນຈະໄດ້ສືບຕໍ່ເກັບກຳຈຳນວນອຸປະຕິເຫດ ແລະ ຜູ້ປະສົບເຄາະຮ້າຍຈາກ ລບຕ ນັບແຕ່ວັນທີ01 ເດືອນມັງກອນ ປີ2008 ເຖິງປະຈຸບັນ ແລະ ຈະສືບຕໍ່ເກັບກຳຈຳນວນອຸປະຕິເຫດທີ່ເກີດຂຶ້ນໃໝ່. ໃນນັ້ນ, ສຳລັບປຶ້ມລາຍງານການສຳຫຼວດແຫ່ງຊາດໄລຍະ 1 ພາກພາສາລາວແມ່ນສຳເລັດໃນການຈັດພິມ ແລະ ສາມາດສະໜອງໃຫ້ທຸກພາກສ່ວນໄດ້ທັງພາກ ພາສາລາວ ແລະ ພາສາອັງກິດ ຫຼືວ່າສາມາດເຂົ້າເບິ່ງໄດ້ຢູ່ໃນເວັບໄຊ ຂອງຫ້ອງການ ຄຄຊ. ບັນດາແບບຟອມທັງໝົດທີ່ເກັບກຳໃນໄລຍະທີ່ 2 ແມ່ນກຳລັງປ້ອນໃສ່ລະບົບຖານຂໍ້ມູນແຫ່ງຊາດ ແລະ ຍັງແໜັ້ນເຖິງຂັ້ນຕອນວຽກທີ່ ປະຕິບັດຜ່ານມາໂດຍສະເພາະກໍແມ່ນ ການເກັບກຳຂໍ້ມູນແມ່ນສຳເລັດປະມານ 95%, ສ່ວນທີ່ຍັງເຫຼືອແມ່ນຂໍ້ມູນທີ່ນອນຢູ່ໃນເມືອງທີ່ຫຍຸ້ງຍາກໃນການເດີນທາງ ໂດຍສະເພາະແມ່ນຢູ່ໃນຊ່ວງລະດູຝົນເປັນຕົ້ນແມ່ນ ເມືອງຕະໂອ້ຍ ແລະ ເມືອງສະໝ້ວຍ. ສະນັ້ນ, ບັນດາຂໍ້ມູນທີ່ຍັງບໍ່ທັນໄດ້ເກັບກຳ ແມ່ນຈະມີການແຈ້ງໃຫ້ທຸກຜູ້ປະຕິບັດງານໄດ້ຮັບຮູ້ໃນກອງປະຊຸມກຸ່ມວິຊາການຄັ້ງໜ້າ.

ໃນທ້າຍເດືອນ ກໍລະກົດ 2010ນີ້ ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໄດ້ສຳເລັດຈັດກອງປະຊຸມປຶກສາຫາລືກັບບັນດາອຳນາດການປົກຄອງຂັ້ນແຂວງ, ຂັ້ນເມືອງ, ບັນດາພາກລັດ ແລະ ອົງການທີ່ເຮັດວຽກຮ່ວມກັນ ໃນການລາຍງານອັນທັນດ່ວນ ກໍລະນີຫາກມີອຸປະຕິເຫດເກີດຂຶ້ນໃນຕໍ່ໜ້າ ທົ່ວປະເທດ. ໄດ້ຮັບການລາຍງານຈາກ ຣສສຂັ້ນແຂວງ ຈາກບ້ານທີ່ຍັງບໍ່ທັນຮັບການລາຍງານໄດ້ທັງໝົດ ຈຳນວນ 8, 722ບ້ານ ຂອງຈຳນວນບ້ານທັງໝົດ 8, 746ບ້ານ. ສ່ວນຈຳນວນ 24ບ້ານ ທີ່ຍັງຄ້າງແມ່ນແມ່ນນອນຢູ່ໃນເມືອງໄຊຈຳພອນ, ແຂວງບໍລິຄຳໄຊ ເພາະເປັນເມືອງທີ່ຕັ້ງຂຶ້ນໃໝ່ ແລະ ຫຍຸ້ງຍາກໃນການລາຍງານ.

*<u>ວາລະກອງປະຊຸມທີ່ 5</u>* **(ຄວາມຄືບໜ້າ ທີ່ປຶກສາຂອງໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ)** ທ່ານ. ສະແຕນ ບາເບັນ (ທີ່ປຶກສາຝ່າຍຕ່າງປະເທດ/ຄຄຊ) ໄດ້ລາຍງານກ່ຽວກັບ ທີ່ປຶກສາຄົນໃໝ່ ທີ່ຈະມາເຮັດວຽກຊ່ວຍ ໃນໜ່ວຍງານຊ່ວຍເຫຼືອຜູ້ສົບເຄາະຮ້າຍຈາກ ລບຕ ວ່າ; ປະຈຸບັນພວກເຮົາກຳລັງມີການປຶກສາຫາລື ກັບອົງການສະຫະປະຊາຊາດ ປະຈຳລາວ ວ່າຈະສາມາດຕໍ່ສັນຍາໄລຍະສັ້ນໃຫ້ແກ່ທີ່ປຶກສາຄົນເກົ່າເພື່ອມາຊ່ວຍສືບຕໍ່ສ້າງ 6ແຜນຍຸດທະສາດ ຂອງໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ ຫຼື ຈະເປີດຮັບຕຳແໜ່ງຜູ້ຊ່ວຍຄົນໃໝ່ນັ້ນ ແມ່ນຍັງບໍ່ທັນສາມາດສະຫຼຸບໄດ້ເທື່ອ ແລະ ຄາດວ່າອາທິດໜ້າພວກເຮົາຈະສາມາດສະຫຼຸບໄດ້.

*<u>ວາລະກອງປະຊຸມທີ່ 6</u>* **(ບົດນຳສະເໜີກ່ຽວກັບນະໂຍບາຍ ແລະ ດຳເນີນໂຄງການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຢູ່ແຂວງຊຽງຂວາງ)** ທ່ານ ນໍຣິຢາຊຸ ໂອກາຢະມາ (ຜູ້ຕາງໜ້າ ອົງການສະມາຄົມຊ່ວຍເຫຼືອ ແລະ ສົງເຄາະຄົນພິການແຫ່ງປະເທດຍີ່ປຸ່ນປະຈຳລາວ / ເອເອອາ)ໄດ້ລາຍງານໃຫ້ຮູ້ກ່ຽວກັບ; ໂຄງການທີ່ສ້າງຕັ້ງຂຶ້ນໃໝ່ ໃນການຊ່ວຍເຫຼືອປິ່ນປົວຜູ້ລອດຊີວິດຈາກ ລບຕ ຢູ່ແຂວງຊຽງຂວາງໃນໄລຍະ 3ປີ:

ປີທີ່ 1 ແມ່ນຈະດຳເນີນໂຄງການຢູ່ ເມືອງຜາໄຊ ແລະເມືອງແປກ.

ປີທີ່ 2 ແມ່ນຈະດຳເນີນໂຄງການຢູ່ ເມືອງພູກູດ ແລະ ເມືອງຄຳ.

ປີທີ່ 3 ແມ່ນຈະດຳເນີນໂຄງການຢູ່ ເມືອງໜອງແຮດ ແລະ ເມືອງຄູນ.

ໂຄງການດັ່ງກ່າວແມ່ນຂຶ້ນກັບສູນຟື້ນຟູແຫ່ງຊາດ ໂດຍການຊີ້ນຳຈາກ ກະຊວງສາທາລະນະສຸກ. ນອກນັ້ນຍັງໄດ້ເຮັດວຽກປະສານງານກັບໂຮງໝໍແຂວງ. ສ່ວນຈຸດປະສົງ ຂອງໂຄງການແມ່ນເພື່ອປິ່ນປົວຂັ້ນພື້ນຖານ ແລະ ຈັດຕຽມພາຫະນະນຳສົ່ງຜູ້ທີ່ຖືກເຄາະຮ້າຍໃຫ້ຮັບການປິ່ນປົວຢ່າງຮີບດ່ວນ ໃນເວລາເກີດມີອຸປະຕິເຫດ. ສ່ວນກິດຈະກຳຫຼັກ ແມ່ນໄດ້ຝຶກອົບຮົມໃຫ້ນາຍບ້ານ, ອາສາສະໝັກຂັ້ນບ້ານ, ແພດປະຈຳສຸກສາລາຂອງບ້ານ ໃນການນຳໃຊ້ອຸປະກອນ ແລະ ການປິ່ນປົວຂັ້ນພື້ນຖານ. ນອກນັ້ນ, ມີການຝຶກອົບຮົມໃຫ້ບັນດາ ນັກຂັບຂີ່ພາຫະນະທີ່ຈະນຳເອົາຜູ້ຖືກເຄາະຮ້າຍນັ້ນໄປຮັບການປິ່ນປົວຢູ່ໂຮງໝໍໃນຂັ້ນເມືອງ, ຂັ້ນແຂວງ ໃຫ້ທຸກໆບ້ານທີ່ນອນຢູ່ໃນເມືອງເປົ້າໝາຍຂອງໂຄງການ ແລະ ຍັງແຈກຢາຍແຜ່ນພັບໄປເຖິງບັນດາເມືອງ, ບ້ານທີ່ມີເປົ້າໝາຍ ພ້ອມທັງໄດ້ລາຍງານໃຫ້ຮູ້ຈຳນວນງົບປະມານທັງໝົດ ທີ່ຈະໃຊ້ຈ່າຍໃນການປະຕິບັດງານຢູ່ໃນໄລຍະ 3ປີ.

*<u>ວາລະກອງປະຊຸມທີ່ 7</u>* **(ຄວາມຄືບໜ້າໃນການກະກຽມງານວາງສະແດງ ໃສ່ກອງປະຊຸມລັດພາຄີສົນທິສັນຍາ ຄັ້ງທຳອິດທີ່ນະຄອນຫຼວງວຽງຈັນ ໃນວັນທີ 9-12/11/2010)** ທ່ານ ທອງດີ ພົມມະວົງສາ (ຫົວໜ້າໜ່ວຍງານສຶກສາຄວາມສ່ຽງໄພຈາກ ລບຕ ຍັງໄດ້ລາຍງານໃຫ້ຮູ້ວ່າ; ຖ້າບັນດາຜູ້ປະຕິບັດງານໃດ ຕ້ອງການທີ່ຈະເຂົ້າຮ່ວມໃນງານວາງສະແດງຜົນງານຂອງອົງການ ແມ່ນໃຫ້ມາລົງທະບຽນ ພ້ອມທັງຊອບຖາມລາຍລະອຽດຕ່າງໆ ຢ່າງຮີບດ່ວນ ກັບອະນຸກຳມະການຈັດງານວາງສະແດງໄດ້ທີ່ຫ້ອງການ ຄຄຊ.

***ວາລະກອງປະຊຸມທີ 8*** (ສ້າງລະບົບຕິດຕາມຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ) ທ່ານ ເພັດສະຫວ່າງ ສູນນະລາດ, ຮອງ ຫົວໜ້າຫ້ອງການ ຄຄຊຍັງໄດ້ລາຍງານໃຫ້ຮູ້ເຖິງແຜນວຽກຂອງໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ ທີ່ຈະປະຕິບັດໃນຕົ້ນປີ 2011 ກ່ຽວກັບການສ້າງລະບົບຕິດຕາມຫາຜູ້ຫຼອດຊີວິດຈາກ ລບຕ ວ່າ; ປະຈຸບັນທາງໜ່ວຍງານກຳລັງສ້າງ 6ແຜນຍຸດທະສາດ ແລະ ໃນທຸກແຜນຍຸດທະສາດແມ່ນຈະໃຫ້ການຊ່ວຍເຫຼືອແກ່ຜູ້ປະສົບເຄາະຮ້າຍຈາກ ລບຕ. ເປົ້າໝາຍຫຼັກຂອງການສ້າງລະບົບຕິດຕາມຫາຜູ້ທີ່ລຫຼອດຊີວິດເຫຼົ່ານັ້ນແມ່ນ; ກໍລະນີເກີດມີອຸປະຕິເຫດເກີດຂຶ້ນ ແລະ ຜູ້ທີ່ຫຼອດຊີວິດນັ້ນໄດ້ຮັບການປິ່ນປົວທາງດ້ານການແພດ, ການຟື້ນຟູທາງດ້ານຮ່າງກາຍ ແລະ ລວມໄປເຖິງວ່າເຂົາເຈົ້າໄດ້ຮັບການຊ່ວຍເຫຼືອທາງດ້ານເສດຖະກິດຕ່າງໆຢູ່ໃນສັງຄົມ. ໃນນັ້ນ, ສິ່ງສຳຄັນທີ່ສຸດແມ່ນພວກເຮົາຈະນຳໃຊ້ລະບົບຖານຂໍ້ມູນຊະນິດໃດເພື່ອຕິດຕາມຫາເຂົາເຈົ້າ? ຜູ້ຫຼອດຊີວິດເຫຼົ່ານັ້ນແມ່ນໄດ້ຮັບການບໍລິການແນວໃດແດ່? ຈະມີການກຳນົດເອົາຂໍ້ມູນຢູ່ໃນປີໃດ? ເພາະວ່າຂໍ້ມູນທີ່ພວກເຮົາເລີ່ມປະຕິບັດໃນການເກັບກຳແມ່ນເລີ່ມຢູ່ໃນປີ 1964 ຈົນເຖິງປະຈຸບັນ ຫຼືວ່າຈະເອົາຂໍ້ມູນຢູ່ໃນໄລຍະ 10ມາຫາປະຈຸບັນ. ສະນັ້ນ, ຈິ່ງຢາກໃຫ້ບັນດາຜູ້ປະຕິບັດງານໃຫ້ມີການປຶກສາຫາລື, ເຮັດວຽກຮ່ວມກັນ ແລະ ເປັນເອກະພາບກັນໃນການປະຕິບັດວຽກງານໃນຕໍ່ໜ້າ. ໃນນັ້ນ, ກໍຍັງຈະມີການອອກແບບ ແບບຟອມໃຫ້ສຳເລັດກ່ອນຈະເລີ່ມປະຕິບັດວຽກ ແລະ ຈະມີວິທີການສຳພາດແບບໃດເພື່ອໃຫ້ສອດຄ່ອງກັບຕົວຈິງ.

***ວາລະກອງປະຊຸມທີ 9*** **(ການສະເໜີແຜນວຽກປະຈຳປີ 2011 ຂອງບັນດາຜູ້ປະຕິບັດງານ)** ທ່ານ ບຸນຕາວ ຈັນທະວົງສາ, ຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ ໄດ້ແຈ້ງທີ່ບັນດາຜູ້ປະຕິບັດງານແຕ່ລະພາກສ່ວນວ່າ; ຢາກໃຫ້ສົ່ງການລາຍງານແຜນທີ່ຈະປະຕິບັດວຽກໃນປີ 2011 ໂດຍສະເພາະ ກໍແມ່ນໃນບັນດາແຂວງເປົ້າໝາຍຕ່າງໆ ທີ່ຈະໄປປະຕິບັດງານນັ້ນ ມາຍັງຫ້ອງການ ຄຄຊ ກໍຄືໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ, ເພື່ອຈະໄດ້ເອົາມາ ສັງລວມໃນການສ້າງລະບົບຕິດຕາມຫາຜູ້ຫຼອດຊີວິດ ແລະ ສາມາດນຳໄປເຜີຍແຜ່ໃຫ້ຜູ້ປະສານງານຂອງຫ້ອງການ ຄຄຊ ຢູ່ໃນຂັ້ນແຂວງ, ຂັ້ນເມືອງ ແລະ ໃນເວລາມີກອງປະຊຸມປຶກສາຫາຫລືຂຶ້ນ.

***ວາລະກອງປະຊຸມທີ 10*** (ບັນຫາອື່ນໆທີ່ຍົກຂຶ້ນມາໃນກອງປະຊຸມ)

**ທ່ານ ທອງລິດ ສີຫາລາດ ຈາກສູນຟື້ນຟູຄົນພິການແຫ່ງຊາດໄດ້ເຫັນວ່າ;** ທີ່ຜ່ານມາກໍມີແຕ່ອົງການ ເວີດສອີດູນເຄຊັນ ທີ່ໃຫ້ການຊ່ວຍເຫຼືອນະໂຍບາຍການປິ່ນປົວຜູ້ປະສົບເຄາະຮ້າຍຈາກ ລບຕ ແລະ ປະຈຸບັນ ເອເອອາ ກໍໄດ້ມີໂຄງການເພີ່ມອີກໃນການ ຊ່ວຍເຫຼືອເລື້ອງນະໂຍບາຍການປິ່ນປົວ ຢູ່ໃນແຂວງຊຽງຂວາງ ແລະ ກໍຍັງຊ່ວຍເຫຼືອປະເພດ ລໍ້ເລື່ອນ ແລະ ລໍ້ໂຍກ, ສ່ວນອົງການໂຄບກໍຊ່ວຍເຫຼືອປະເພດແຂນ ຂາທຽມ ລວມໄປເຖິງບັນດາອົງການຕ່າງໆ ແຕ່ການບໍລິການເຫຼົ່ານັ້ນ ກໍອາດຈະບໍ່ສາມາດຕອບສະໜອງ ແລະ ເຂົ້າເຖິງເຂົາເຈົ້າໄດ້ໝົດ. ໃນການລົງຢ້ຽມຢາມທີ່ແຂວງ ສາລະວັນ ກໍມີເດັກນ້ອຍຜູ້ໜຶ່ງທີ່ເປັນຜູ້ປະສົບເຄາະຮ້າຍຈາກ ລບຕ ແລະ ເດັກນ້ອຍຜູ້ນັ້ນກໍຕ້ອງການຄວາມຊ່ວຍໃນດ້ານຕ່າງໆ. ສະນັ້ນ, ມັນຈະເປັນການດີຖ້າຫາກມີການສ້າງລະບົບການຕິດຕາມຊ່ວຍເຫຼືອຜູ້ທີ່ຫຼອດຊີວິດຈາກ ລບຕ.

**ທ່ານ. ບຸດທາ ໄຊຂາວ, ພະແນກພິການ ແລະ ຜູ້ສູງອາຍຸ ກະຊວງແຮງງານໄດ້ມີຄຳເຫັນວ່າ;** ໄດ້ມີອຸປະຕິເຫດເກີດຂຶ້ນໃນປີ 1965 ເປັນຜູ້ທີ່ຫຼອດຊີວິດຈາກ ລບຕ ແຕ່ຜູ້ກ່ຽວສາມາດດຳລົງຊີວິດ ແລະ ທຳມາຫາກິນລ້ຽງຊີບດ້ວຍຕົນເອງ. ສະນັ້ນ, ຜູ້ກ່ຽວນີ້ຖືວ່າຈະໄດ້ນອນຢູ່ໃນເປົ້າໝາຍຂອງຜູ້ຫຼອດຊີວິດບໍ? ສ່ວນງົບປະມານທີ່ຈະເອົາມານຳໃຊ້ໃນການສ້າງລະບົບ ຕິດຕາມນັ້ນຈາກພາກສ່ວນຂອງລັດ ຫຼື ຈາກບັນດາອົງການປະຕິບັດງານ.

**ທ່ານ ເພັດສະຫວ່າງ ສູນນະລາດ, ຮອງ ຫົວໜ້າຫ້ອງການ ຄຄຊ ຍັງໄດ້ເນັ້ນຕື່ມວ່າ;** ຂະແໜງການເກັບກູ້ລະເບີດແມ່ນໄດ້ປະຕິບັດຕາມໜ້າທີ່ແຜນພັດທະນາເສດຖະກິດຂອງລັດ ແລະ ເພື່ອລຶບລ້າງຄວາມທຸກຈົນ. ເພາະສ່ວນຫຼາຍຜູ້ທີ່ປະສົບເຄາະຮ້າຍຈາກ ລບຕ ແມ່ນມີຖານະຄອບຄົວທີ່ທຸກຈົນ. ຈຳນວນງົບປະມານທີ່ຈະມານຳໃຊ້ຊ່ວຍເຫຼືອຜູ້ປະສົບເຄາະຮ້າຍເຫຼົ່ານັ້ນແມ່ນ ຫຼັງຈາກ 6ແຜນຍຸດທະສາດຫາກຖືກຮັບຮອງຈາກບັນດາຜູ້ໃຫ້ທຶນແລ້ວ ຈະມີການສ້າງກອງທຶນຊ່ວຍເຫຼືອໃຫ້ແກ່ຜູ້ປະສົບເຄາະຮ້າຍຈາກ ລບຕ. ແຕ່ໃນກໍລະນີທີ່ວ່າ; ຖ້າຜູ້ປະສົບເຄາະຮ້າຍແມ່ນຢູ່ໃນໄລຍະສິບປີ ແຕ່ຜູ້ກ່ຽວມີຖານະເສດຖະກິດຄອບຄົວທີ່ດີ ກໍບໍ່ຈຳເປັນທີ່ຈະໄດ້ຮັບການຊ່ວຍເຫຼືອໃນກອງທຶນດັ່ງກ່າວ. ສະນັ້ນ, ເປົ້າໝາຍຫຼັກຂອງຜູ້ທີ່ຈະໄດ້ຮັບກອງທຶນນີ້ແມ່ນ ສະເພາະຜູ້ທີ່ດ້ອຍໂອກາດ ແລະ ມີຖານະຄອບຄົວທີ່ທຸກຈົນ ແລະ ບໍ່ສາມາດເອົາຕົນເອງອອກຈາກຄວາມທຸກຍາກໄດ້.

**ທ່ານ ນໍຣິຢາຊຸ ໂອກາຢາມາ ຜູ້ຕາງໜ້າຈາກ ສະມາຄົມຊ່ວຍເຫຼືອ ແລະ ສົງເຄາະຄົນພິການແຫ່ງປະເທດຍີ່ປຸ່ນປະຈຳລາວໄດ້** ປະກອບຄຳເຫັນໃສ່ໃນລະບົບການຕິດຕາມຫາຜູ້ຫຼອດຊີວິດ ໂດຍສະເພາະກໍແມ່ນການຟື້ນຟູທາງດ້ານຮ່າງກາຍ. ທາງ ອົງການ ເອເອອາ ກໍແມ່ນໜຶ່ງໃນອົງການທີ່ຊ່ວຍເຫຼືອປະເພດ ລໍ້ເລື່ອນ ແລະ ລໍ້ໂຍກ ໃຫ້ແກ່ຄົນພິການໂດຍບໍ່ມີການຈຳແນກປະເພດພິການໃນນັ້ນ, ມີຢູ່ປະມານ 500ຄັນ/ປີ. ແຕ່ມັນກໍ່ເປັນໄປໄດ້ຍາກທີ່ພວກເຮົາຈະສາມາດໄປຕິດຕາມໄດ້ຈຳນວນທັງໝົດວ່າ ລໍ້ທີ່ເຂົາເຈົ້າ

ພາກສ່ວນທີ່ປະຕິບັດງານຕົວຈິງ.

***ວາລະກອງປະຊຸມທີ່ 11*** (ວັນເດືອນປີ ກອງປະຊຸມກຸ່ມວິຊາການຄັ້ງໜ້າຂອງໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ) ສຳລັບກອງປະ ຊຸມກຸ່ມວິຊາການຂອງໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ ໃນຄັ້ງໜ້າແມ່ນຈະໄດ້ທີ່ຈັດຂຶ້ນເປັນປະຈຳທຸກໆສອງເດືອນ ແລະ ຈະຖືກແຈ້ງໃຫ້ທຸກຜູ້ປະຕິບັດງານໃຫ້ຮັບຮູ້ພາຍຫຼັງ.

ກອງປະຊຸມໄດ້ປິດລົງໃນເວລາ 12 ຕອນບ່າຍ.

ຮຽບຮຽງໂດຍ:

ທ່ານ ເພັດສະຫວ່າງ ສູນນະລາດ

ຈັດຕຽມໂດຍ:

ທ່ານນາງ. ມະນີຈັນ ແກ້ວລະຄອນ

## ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມກຸ່ມວິຊາການຂອງ ໜ່ວຍງານຊ່ວຍຜູ້ຖືກເຄາະຮ້າຍ
## ໄດ້ຈັດຂຶ້ນໃນທີ 29 / 09 / 2010 ທີ່ຫ້ອງປະຊຸມ ສູນຟື້ນຟູຄົນພິການແຫ່ງຊາດ

| ຊື່ ແລະ ນາມສະກຸນ | ອົງການຈັດຕັ້ງ | ນຳເບີໂທລະສັບ | ທີ່ຢູ່ອີເມວ |
|---|---|---|---|
| ທ່ານ. ເພັດສະຫວ່າງ ສູນນະລາດ | ຮອງອຳນວຍການ/ຄຄຊ | 55009616 | phetsavang@gmail.com |
| ທ່ານ. ບຸນຕາວ ຈັນທະວົງສາ | ຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ/ຄຄຊ | 2207361 | bountaochanthavongsa@gmail.com |
| ທ່ານນາງ. ມະນີຈັນ ແກ້ວລະຄອນ | ວິຊາການໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ/ຄຄຊ | 2822256 | keolakhone@gmail.com |
| ທ່ານ. ສືປະເສີດ ນະວົງສາ | ເກັບກຳຂໍ້ມູນ/ຄຄຊ | 2025634 | seutnavongsa@yahoo.com |
| ທ່ານ. ສົມໃຈ ເຊັ່ງວ່າງ | ເກັບກຳຂໍ້ມູນ/ຄຄຊ | 2544749 | somchaivang@yahoo.com |
| ທ່ານນາງ. ປານີ ສຸວັນທະລີສິດ | ກວດກາແບບຟອມ/ຄຄຊ | 77850626 | Pany.@gmail.com |
| ທ່ານ. ທອງດີ ພົມມະວົງສາ | ຫົວໜ້າໜ່ວຍງານສຶກສາຄວາມສ່ຽງໄພ/ຄຄຊ | 55669803 | |
| ທ່ານ. ສົມປະສິດ ກົນນາວົງ | ຫົວໜ້າໜ່ວຍງານກວດການມາດຕະຖານ/ຄຄຊ | 2628253 | Sompasith.kounavong@gmail.com |
| ທ່ານ. ພົມມະຈັນ | ຫົວໜ້າໜ່ວຍງານເກັບກູ້/ຄຄຊ | 55693136 | Pmc.Aeod@gmail.com |
| ທ່ານ. ຟີວບິນ | ຊ່ຽວຊານ/ຄຄຊ | 2013929 | beanphil1@yahoo.co.uk |
| ທ່ານ. ສະແຕນ ບາເບັນ | ທີ່ປຶກສາ/ຄຄຊ | 55516251 | Stanislas Brabant@gmail.com |
| ທ່ານ. ເຢີກ | ຊ່ຽວຊານ/ຄຄຊ | 3614124 | Jeurg.hug@hotmail.com |
| ທ່ານ. ກາວີພອນ ສຸໄທ | ອົງການກາແດງລາວ | 55682594 | kaviphone@hotmail.com |
| ທ່ານ. ບຸດທາ ໄຊຂາວ | ພະແນກພິການ ແລະ ຜູ້ສູງອາຍຸ ກະຊວງແຮງງານ | 99196957 | Beuthor58@hotmail.com |
| ທ່ານ. ສົມເພັດ ອັກຄະວົງ | ສະມາຄົມຄົນພິການແຫ່ງຊາດ | 53610381 | akhavong@yahoo.com |
| ທ່ານ. ມາກ ກໍແມນ | ອົງການເວີດສອິດູນເຄຊັນ | 77968291 | mark@wec.laopdr.com<br>markcarringtongorman@gmail.com |
| ທ່ານ. ວົງດາລາ ວົງພະຈັນ | ອົງການເວີດສອິດູນເຄຊັນ | 55655754 | Vongdala.vongphach@gmail.com |

| | | | |
|---|---|---|---|
| | ສາຂາ | | |
| ທ່ານ. ທອງລິດ ສີຫາລົມດິດ | ສູນຟື້ນຟູຄົນພິການແຫ່ງຊາດ | 55526231 | tchtlnrc@yahoo.com |
| ທ່ານນາງ. ເຄີລີ ເຄັກ | ໂຄບ | 77981702 | Cope.project.coordinator@gmail.com |
| ທ່ານນາງ. ພຸດສະດີ ລາວລີ | ສູນພັດທະນາແມ່ຍິງພິການລາວ | 021820489 | laodwdc@gmail.com |
| ທ່ານ. ໂນລິຍາສຸ ໂອກະຍະມະ | ສະມາຄົມຊ່ວຍເຫຼືອ, ສົງເຄາະຄົນພິການແຫ່ງປະເທດຍີ່ປຸ່ນປະຈຳລາວ | 021 241467 | aarlaos@laopdr.com |
| ທ່ານ. ມິກິຫິໂກະ ຟູກູກະ | ສະມາຄົມຊ່ວຍເຫຼືອ, ສົງເຄາະຄົນພິການແຫ່ງປະເທດຍີ່ປຸ່ນປະຈຳລາວ | 021 241467 | aarlaos@laopdr.com |
| ທ່ານ. ບຸນຍັງ ລັດສະໝີ | ອົງການແຄ ປະຈຳລາວ | 55904070 | bounyang@carelaos.org |
| ທ່ານນາງ. ຈັນທະລະວະດີ | ອົງການຊ່ວຍເຫຼືອສຸຂະພາບຈິດ | 55512121 | Chantharavady.choulamany@basicneeds.org |
| ທ່ານນາງ. ວັນນະພອນ | ອົງການຊ່ວຍເຫຼືອສຸຂະພາບຈິດ | 55609343 | Vannaphone.manibod@basicneeds.org |
| ທ່ານ. ສົມລິດ | ອົງການຊ່ວຍເຫຼືອຄົນພິການແຫ່ງປະເທດເບັນຢ້ຽມ | 77711874 | Zone_tee@hotmail.com |
| ທ່ານນາງ. ໂຄລີ | ອົງການຊ່ວຍເຫຼືອຄົນພິການແຫ່ງປະເທດເບັນຢ້ຽມ | 21412110 | Dis.adviser@laos.handicap.be |
| ທ່ານ. ບຸນພະມິດ ສົມວິຈິດ | ນາຍພາສາແປ | 55513774 | somvichith@yahoo.com |